# ເງື່ອນໄຂຮັບເອົາການຊ່ວຍເຫລືອ

## ຂ້າພະເຈົ້າຈະຮ້ອງເອົາຂໍໄດ້ຢ່າງໃດເພື່ອຈະເປັນລູກຄ້າຂອງ DDA?

- ຂຽນປະກອບໃບຟອມ ແລະ ເອກສານທີ່ຕ້ອງການ. ທ່ານຈະດາວໂຫລດໃບຟອມຂອງ DSHS ໄດ້ເປັນພາສາທີ່ມັກຫລາຍກວ່າຫມູ່ຂອງທ່ານຢູ່ ບ່ອນນີ້. ທ່ານສາມາດຮ້ອງຂໍເອົາຊຸດເອກສານໂດຍການຂຽນປະກອບ ໃບຟອມ ຄຳຮ້ອງຂໍເອົາການບໍລິການແລະລາຍລະອຽດ or ຫລື ໂດຍການສົ່ງກັບຄືນມາລາຍລະອຽດທີ່ຖືກບົ່ງຢູ່ຂ້າງລຸ່ມນີ້:
  - ຄຳຮ້ອງຂໍເອົາເງື່ອນໄຂຮັບເອົາການຊ່ວຍເຫລືອຂອງ DDA
    ຄຳຮ້ອງຂໍເອົາການພິຈາລະນາເງື່ອນໄຂຮັບເອົາການຊ່ວຍເຫລືອຂອງ DDA (14-151)
  - ໃບຍິນຍອມ (14-012)
  - ໃບແຈ້ງການພາກປະຕິບັດເຣື່ອງຄວາມລັບສ່ວນຕົວສຳລັບລາຍລະອຽດເປັນຄວາມລັບຂອງລູກຄ້າ (03-387)
  - ຮັດວໍຊິງຕັນ ການຈົດຊື່ລົງທະບຽນບ່ອນບັດເລືອກຕັ້ງ ສຳລັບຜູ້ສະມັກອາຍຸ 18 ປີ ຫລື ແກ່ກວ່າ
  - ເອກສານທີ່ຢັ້ງຢືນວ່າທ່ານມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ, ຕາມທີ່ຖືກບັນຍາຍຢູ່ໃນ ໃບຟອມ ໃບຟອມ DSHS 14-459 ເງື່ອນໄຂມີສິດໄດ້ຮັບເຈາະຈົງຕໍ່ອາຍຸແລະຊະນິດຂອງຫລັກຖານ ເຊັ່ນວ່າ:
    - ບັນທຶກການສຶກສາ
    - ບັນທຶກກ່ຽວກັບໂຣກຈິດ
    - ບັນທຶກການພະຍາບານ
- ບອກໃຫ້ພວກເຮົາຮູ້ຈັກຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອນຳການຂຽນປະກອບໃບຟອມ ແລະ ການຊອກຫາການບັນທຶກເອກສານ.
  - ຕິດຕໍ່ຫາ ຫ້ອງການ DDA ທ້ອງຖິ່ນຂອງທ່ານ ຫລື ຫ້ອງການທ້ອງຖິ່ນສູນກາງທີ່ຖືກບົ່ງຢູ່ຂ້າງລຸ່ມນີ້:

| ຄາວຕີຂອງບ່ອນຢູ່ອາສັຍ | ໂທຣະສັບ |
|---|---|
| ຄາວຕີ Adams, Asotin, Benton, Chelan, Columbia, Douglas, Ferry, Franklin, Garfield, Grant, Kittitas, Klickitat, Lincoln, Okanogan, Pend Oreille, Spokane, Stevens, Walla Walla, Whitman, Yakima | (800) 462-0624 |
| ຄາວຕີ Island, King, San Juan, Skagit, Snohomish, Whatcom | (800) 788-2053 |
| ຄາວຕີ Clallam, Clark, Cowlitz, Grays Harbor, Jefferson, Kitsap, Lewis, Mason, Pacific, Pierce, Skamania, Thurston, Wahkiakum | (800) 248-0949 |

## ເປັນຫຍັງຂ້າພະເຈົ້າຄວນຈະຮ້ອງຂໍເອົາ DDA?

- DDA ມີ ການບໍຣິການແລະໂຄງການ ແຕກຕ່າງກັນຫລາຍໆຢ່າງລວມທັງການເບິ່ງແຍງດູແລສ່ວນຕົວ, ການຢຸດພັກຊົ່ວຄາວ, ວຽກງານ, ການອູ້ມຊູດ້ານບ່ອນຢູ່ອາສັຍ, ແລະ ມາກມາຍຫລາຍຢ່າງອີກ.
- ການກາຍເປັນລູກຄ້າໃນເບື້ອງຕົ້ນໃນຊີວິດຈະຊ່ວຍເຫລືອທ່ານໃນການປ່ຽນແປງຕໍ່ມາໃນຣະຫວ່າງຂັ້ນຕອນຕ່າງໆຂອງຊີວິດ.
- ຖ້າຫາກວ່າຜູ້ເບິ່ງແຍງດູແລຂອງທ່ານບໍ່ສາມາດທີ່ຈະເອົາການອູ້ມຊູໃຫ້ແກ່ທ່ານໃນອະນາຄົດ, ທ່ານຈະເປັນລູກຄ້າແລ້ວເພາະສະນັ້ນແລ້ວການດຳເນີນການຈະງ່າຍກວ່າເກົ່າ ແລະ ໄວກວ່າເກົ່າ.
- ລູກຄ້າ DDA ບາງຄົນບໍ່ມີການບໍຣິການທີ່ຖືກຈ່າຍເງິນໃຫ້ແຕ່ວ່າເຂົາເຈົ້າຍັງໄດ້ຮັບສິ່ງຕໍ່ລົງໄປນີ້ຢູ່:
  - Informing Families ຫນັງສືຂ່າວສານ
  - ການເຂົ້າເຖິງ Developmental Disabilities Endowment Trust Fund

- ການກວດຮ່າງກາຍປະຈຳປີ ແລະ ການປິ່ນປົວແຂ້ວເພີ້ມເຕີມຜ່ານ Apple Health
- ຄ່າທຳນຽມລູດຣາຄາຜ່ານ Washington Department of Fish and Wildlife
- ບັດຜ່ານລູດຣາຄານຳ Washington State Parks
- ຣາຄາຍ່ອມເຍົາເພີ້ມເຕີມ ທາງເລືອກເອົາບ່ອນຢູ່ອາສັຍ

## ເງື່ອນໄຂຮັບເອົາ DDA ຂອງຂ້າພະເຈົ້າຈະຫມົດອາຍຸ ຫລື ຕ້ອງການການທວນເບິ່ງຄືນບໍ່?

ແມ່ນ. ມັນອາດຈະແມ່ນ. ພວກເຮົາຈະສົ່ງໃບແຈ້ງການເຕືອນໃຈໄປໃຫ້ທ່ານຖ້າຫາກວ່າເງື່ອນໄຂຮັບເອົາການຊ່ວຍເຫລືອຂອງທ່ານໃກ້ຈະຫມົດອາຍຸແລ້ວ ຫລື ຕ້ອງຖືກທວນເບິ່ງຄືນ. ຖ້າຫາກວ່າທ່ານມີຄຳຖາມແນວໃດກະຣຸນາຕິດຕໍ່ຫາພວກເຮົາ.

## ຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕແມ່ນຫຍັງຢູ່ໃນຣັດວໍຊິງຕັນ?

RCW 71A.10.020(5) ຕີຄວາມຫມາຍຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕວ່າເປັນຄວາມເສັຽອົງຄະທາງສະຕິປັນຍາ, ອັມມະພາດແຕ່ກຳເນີດ, ໂຣກລົມບ້າຫມູ, ອໍຕິເຊິມ ຫລື ໂຣກກ່ຽວກັບເສັ້ນປະສາດແນວອື່ນໆ ຫລື ສະພາບອື່ນໆ ທີ່ຄ້າຍຄຽງກັບຄວາມເສັຽອົງຄະດ້ານສະຕິປັນຍາ.

ຄວາມເສັຽອົງຄະຕ້ອງ:

- ໄດ້ເລີ້ມຕົ້ນເກີດມາກ່ອນທ່ານຮອດອາຍຸສິບແປດປີ,
- ໄດ້ດຳເນີນຕໍ່ມາຫລືສາມາດຖືກຄາດຫມາຍວ່າຈະດຳເນີນຕໍ່ໄປຢ່າງບໍ່ແນ່ນອນ, ແລະ
- ເປັນຜົນເຖິງຂອບເຂດຈຳກັດຮ້າຍແຮງ

## ຂ້າພະເຈົ້າສາມາດຊອກຫາກົດຣະບຽບສຳລັບເງື່ອນໄຂຮັບເອົາໄດ້ຢູ່ໃສ?

ກົດເກນສຳລັບການພິຈາຣະນາເບິ່ງເງື່ອນໄຂຮັບເອົາການຊ່ວຍເຫລືອແມ່ນຢູ່ໃນກົດຫມາຍ Chapter 388-823 WAC.

## ຂ້າພະເຈົ້າສາມາດຮ້ອງຂໍເອົາໃຫມ່ໄດ້ບໍ່ຖ້າຫາກວ່າຂ້າພະເຈົ້າບໍ່ມີເງື່ອນໄຂໄດ້ຮັບ?

ແມ່ນ. ທ່ານສາມາດຮ້ອງຂໍເອົາໃຫມ່ໄດ້ຖ້າຫາກວ່າ:

- ເງື່ອນໄຂຮັບເອົາການຊ່ວຍເຫລືອຂອງທ່ານຈະຫມົດອາຍຸໃນວັນເກີດເທື່ອຫນ້າຂອງທ່ານ;
- ທ່ານມີເງື່ອນໄຂໄດ້ຮັບກ່ອນເງື່ອນໄຂຮັບເອົາການຊ່ວຍເຫລືອຂອງທ່ານໄດ້ຫມົດອາຍຸແລ້ວ;
- ເງື່ອນໄຂຮັບເອົາການຊ່ວຍເຫລືອຂອງທ່ານໄດ້ຖືກຕັດຍ້ອນວ່າທ່ານບໍ່ແມ່ນຄົນອາສັຍຢູ່ຂອງຣັດວໍຊິງຕັນຕໍ່ໄປອີກແລ້ວ; ຫລື
- ທ່ານໄດ້ຖືກພົບວ່າບໍ່ມີເງື່ອນໄຂໄດ້ຮັບໃນຜ່ານມາ, ແຕ່ວ່າມີຣາຍຣະອຽດໃຫມ່.

## ຂ້າພະເຈົ້າຈະຮ້ອງຂໍເອົາການບໍຣິການນຳ DDA ໄດ້ແນວໃດ?

- ຖ້າຫາກວ່າທ່ານ **ບໍ່** ແມ່ນລູກຄ້າຂອງ DDA ຢູ່, ຂຽນປະກອບ ແລະ ສົ່ງເຂົ້າມາໃບຟອມ ແລະ ເອກສານທີ່ຕ້ອງການ.
- ຖ້າຫາກວ່າທ່ານແມ່ນລູກຄ້າຂອງ DDA ຢູ່ ແລະ ບໍ່ມີຜູ້ຈັດການຊ່ວຍເຫລືອເອກສານເທື່ອ, ຂຽນປະກອບ Service ຄຳຮ້ອງຂໍເອົາການສົ່ງຕໍ່ແລະຣາຍຣະອຽດ ຫລື ໂທຫາພວກເຮົາ.
- ທ່ານອາດຈະບໍ່ຕ້ອງເປັນລູກຄ້າຂອງ DDA ເພື່ອຈະຮັບເອົາການບໍຣິການທີ່ທ່ານຕ້ອງການ.

- ສຳລັບເດັກນ້ອຍ - DDA ເອື້ອເຟື້ອການເບິ່ງແຍງດູແລສ່ວນຕົວຜ່ານ Community First Choice ສຳລັບເດັກນ້ອຍບໍ່ກ່ຽວວ່າເຂົາເຈົ້າຈະເປັນລູກຄ້າຂອງ DDA ຫລື ບໍ່ກໍຕາມ. ເຖິງແມ່ນວ່າທ່ານຈະບໍ່ມີຄວາມເສັ່ຽອິງຄະດ້ານການຈະເຣີນເຕີບໂຕກໍຕາມ, ທ່ານອາດຈະມີເງື່ອນໄຂໄດ້ຮັບການເບິ່ງແຍງດູແລສ່ວນຕົວ.
- ສຳລັບຜູ້ໃຫຍ່ – ຜູ້ໃຫຍ່ທີ່ຕ້ອງການການເບິ່ງແຍງດູແລສ່ວນຕົວແຕ່ວ່າບໍ່ແມ່ນລູກຄ້າຂອງ DDA ສາມາດໄດ້ຮັບການບໍຣິການອັນນີ້ຜ່ານ Aging and Long-Term Support Administration.